ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 2119 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2020

# ຂໍ້ຕົກລົງ
# ວ່າດ້ວຍ ການກວດກາຄື້ນຄວາມຖີ່ວິທະຍຸສື່ສານ

- ອີງຕາມ ກົດໝາຍວ່າດ້ວຍ ຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017, ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ລັດຖະມົນຕີ ອອກຂໍ້ຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ, ຂອບເຂດສິດ ແລະ ໜ້າທີ່ ກ່ຽວກັບການປະຕິບັດວຽກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອສົ່ງເສີມ ແລະ ປົກປ້ອງ ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນໃສ່ຮັບປະກັນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍຸຕິທຳ ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 2 ການກວດກາຄື້ນຄວາມຖີ່ວິທະຍຸສື່ສານ**

ການກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແມ່ນການຕິດຕາມກວດກາສະຖານີຄື້ນຄວາມຖີ່ວິທະຍຸສື່ສານ ແລະ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານປະເພດຕ່າງໆ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ** ໝາຍເຖິງ ພະນັກງານ-ລັດຖະກອນທີ່ສັງກັດຢູ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ທີ່ຖືກແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ວຽກງານສະເພາະກິດໃດໜຶ່ງ;

**2. ອຸປະກອນກວດກາຄື້ນຄວາມຖີ່ວິທະຍຸສື່ສານ** ໝາຍເຖິງ ອຸປະກອນ ຫຼື ພາຫະນະ ທີ່ນຳໃຊ້ເຂົ້າໃນວຽກງານການວັດແທກ, ວິເຄາະ ແລະ ຊອກຫາຄື້ນຄວາມຖີ່ວິທະຍຸສື່ສານ;

**3. ເປົ້າໝາຍຖືກກວດກາ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຄື້ນຄວາມຖີ່ວິທະຍຸສື່ສານ ຢູ່ໃນ ສປປ ລາວ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຢູ່ ສປປ ລາວ.

## ໝວດທີ 2
## ການຕິດຕາມກວດກາຄື້ນຄວາມຖີ່ວິທະຍຸສື່ສານ

**ມາດຕາ 5 ການລົງຕິດຕາມກວດກາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ການລົງຕິດຕາມກວດກາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ມີ ດັ່ງນີ້:

1. ນຳໃຊ້ພາຫະນະ ແລະ ອຸປະກອນກວດກາຄື້ນຄວາມຖີ່ວິທະຍຸສື່ສານ ປະເພດຄົງທີ່, ເຄື່ອນທີ່, ແບບພົກພາ ແລະ ເຄື່ອງບິນບໍ່ມີຄົນຂັບ (Drone);

2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອລົງຕິດຕາມກວດກາ ຫຼື ປະຈຳການ ໃນສະຖານທີ່ທີ່ເປັນເປົ້າໝາຍຖືກກວດກາ;

3. ກວດກາສະເພາະກິດໃດໜຶ່ງ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາ;

4. ກວດກາສະຖານີຄື້ນຄວາມຖີ່ວິທະຍຸສື່ສານໂດຍກົງ ທີ່ເປັນເປົ້າໝາຍຫຼໍ່ແຫຼມ.

**ມາດຕາ 6 ເນື້ອໃນກວດກາ**

ເນື້ອໃນກວດກາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ມີ ດັ່ງນີ້:

1. ໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;
2. ໃບຮັບຮອງມາດຕະຖານເຕັກນິກ, ການນຳເຂົ້າ ແລະ ຕິດຕັ້ງ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ;
3. ໃບຢັ້ງຢືນຄື້ນຄວາມຖີ່ວິທະຍຸສື່ສານຂອງເຄື່ອງບິນບໍ່ມີຄົນຂັບ (Drone);
4. ທຸກຍ່ານ, ແຖບ ແລະ ຊ່ອງ ຄື້ນຄວາມຖີ່ວິທະຍຸສື່ສານ;
5. ຊອກຫາແຫຼ່ງກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ;
6. ວັດແທກຄ່າຂໍ້ມູນເຕັກນິກຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ.

**ມາດຕາ 7 ການກວດກາມາດຕະຖານຄວາມປອດໄພການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ**

ການກວດກາມາດຕະຖານຄວາມປອດໄພການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ ປະຕິບັດ ດັ່ງນີ້:

1. ກວດຂໍ້ມູນທາງດ້ານເຕັກນິກຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ;

2. ກວດເລກລະຫັດອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ;

3. ກວດກາການຮັບຮອງມາດຕະຖານເຕັກນິກ;

4. ກວດກາວັດແທກການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ, ຄວາມແຮງສະໜາມໄຟຟ້າ, ຄວາມແຮງສະໜາມແມ່ເຫຼັກ, ຄວາມໜາແໜ້ນຕໍ່ກຳລັງສົ່ງ ແລະ ອັດຕາສ່ວນດູດກືນພະລັງງານສະເພາະ ຕາມລະບຽບການສະເພາະ.

## ໝວດທີ 3
## ຂໍ້ຫ້າມ

**ມາດຕາ 8 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ນຳເຂົ້າ, ຕິດຕັ້ງ, ນຳໃຊ້ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຄື້ນສັນຍານຈາກຕ່າງປະເທດທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ກົດໜ່ວງຖ່ວງດຶງ ແລະ ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ;

3. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ;

4. ເປັນສື່ກາງ, ໃຫ້ສິນບົນ ແລະ ຮັບສິນບົນ ເພື່ອຜົນປະໂຫຍດໃນວຽກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 9 ຂໍ້ຫ້າມສຳລັບເປົ້າໝາຍຖືກກວດກາ**

ຫ້າມຜູ້ໃຫ້ບໍລິການ ແລະ ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ບໍ່ຖືກຕາມເປົ້າໝາຍ;

2. ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ບໍ່ຖືກຕາມເງື່ອນໄຂທີ່ກຳນົດໄວ້ໃນໃບອະນຸຍາດ;

3. ປະຕິເສດການສະໜອງຂໍ້ມູນ, ຫຼັກຖານ, ເອກະສານທີ່ກ່ຽວຂ້ອງກັບການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

4. ໃຫ້ສິນບົນພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ;

5. ຊຸກເຊື່ອງ, ທຳລາຍອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ທີ່ເປັນຫຼັກຖານຂອງການກວດກາ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 10 ຂໍ້ຫ້າມສຳລັບພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ

ຫ້າມພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ ແລະ ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ;

2. ເອົາບັດ ຫຼື ເອກະສານຢັ້ງຢືນການເຮັດວຽກຂອງພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ບຸກຄົນອື່ນນຳໃຊ້;

3. ນຳເອົາອຸປະກອນກວດກາຄື້ນຄວາມຖີ່ວິທະຍຸສື່ສານປະເພດຕ່າງໆ ທີ່ຕົນຄຸ້ມຄອງໄປນຳໃຊ້ສ່ວນຕົວ ຫຼື ໃຫ້ບຸກຄົນອື່ນນຳໃຊ້;

4. ຮັບສິນບົນ ຫຼື ຕໍ່ລອງກັບເປົ້າໝາຍຖືກກວດກາໃນຮູບການຕ່າງໆ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ສິດ ແລະ ໜ້າທີ່ຂອງພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແລະ ການແກ້ໄຂຄື້ນຄວາມຖີ່ວິທະຍຸສື່ສານລົບກວນ

ມາດຕາ 11 ສິດ ແລະ ໜ້າທີ່ຂອງພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ

ພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາທຸກຍ່ານຄື້ນຄວາມຖີ່ວິທະຍຸສື່ສານ ຢ່າງເປັນປົກກະຕິ, ຕາມການສະເໜີຂອງພາກສ່ວນຕ່າງໆ ແລະ ຕາມທິດຊີ້ນຳຂອງຂັ້ນເທິງ;

2. ກວດກາຊອກຫາແຫຼ່ງທີ່ມາຂອງສັນຍານລົບກວນ ແລະ ການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ ຂອງທຸກສະຖານີ;

3. ຄຸ້ມຄອງ, ຕິດຕາມກວດກາ ການນຳເຂົ້າ, ຈຳໜ່າຍ, ຕິດຕັ້ງ, ຜະລິດ ແລະ ສົ່ງອອກ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ;

4. ສັ່ງຢຸດຕິການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານຂອງທຸກສະຖານີ ທີ່ບໍ່ໄດ້ຮັບອະນຸຍາດ;

5. ສັ່ງຢຸດຕິການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານຊົ່ວຄາວຂອງທຸກສະຖານີ ໃນບໍລິເວນຖືກສິ່ງໃສ ທີ່ກໍ່ໃຫ້ເກີດການລົບກວນ;

6. ແກ້ໄຂຄື້ນຄວາມຖີ່ວິທະຍຸສື່ສານລົບກວນ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ສາກົນ;

7. ລົງຕິດຕາມກວດກາ ໃບອະນຸຍາດນຳໃຊ້ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຄື້ນຄວາມຖີ່ວິທະຍຸສື່ສານ ປະຈຳປີ;

8. ລົງຕິດຕາມກວດກາ ການນຳເຂົ້າອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານຊົ່ວຄາວຂອງທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ;

9. ປະສານສົມທົບກັບພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂໃນການອໍານວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ;

10. ອາຍັດອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ທີ່ບໍ່ມີໃບອະນຸຍາດຮັບຮອງ ຫຼື ໃບຢັ້ງຢືນມາດຕະຖານເຕັກນິກ, ໃບອະນຸຍາດນໍາເຂົ້າ, ໃບອະນຸຍາດນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ໃບອະນຸຍາດນໍາໃຊ້ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ຈາກກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

11. ຄຸ້ມຄອງຂອງກາງທີ່ຍຶດ ຫຼື ອາຍັດໄວ້ ເພື່ອລໍຖ້າຜົນຂອງການພິຈາລະນາ ຂອງຂັ້ນເທິງທີ່ກ່ຽວຂ້ອງ;

12. ກ່າວເຕືອນ ແລະ ນໍາໃຊ້ມາດຕະການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ກົດໝາຍ ແລະ ຂໍ້ຕົກລົງສະບັບນີ້;

13. ກວດຂໍ້ມູນທາງດ້ານເຕັກນິກອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ກ່ຽວກັບກໍາລັງສົ່ງ, ຄວາມກວ້າງ (Bandwidth) ແລະ ຄື້ນຄວາມຖີ່ວິທະຍຸສື່ສານ ກ່ອນອອກໃບອະນຸຍາດນໍາໃຊ້;

14. ກວດກາ, ວັດແທກ ແລະ ຢັ້ງຢືນມາດຕະຖານຄວາມປອດໄພຂອງການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ ຂອງເສົາຮັບ-ສົ່ງສັນຍານ ແລະ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ກ່ອນ ແລະ ຫຼັງການນໍາໃຊ້;

15. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທິດຊີ້ນໍາຂອງຂັ້ນເທິງ, ກົດໝາຍ ແລະ ລະບຽບການທີ່ກໍານົດໄວ້.

**ມາດຕາ 12 ການແກ້ໄຂຄື້ນຄວາມຖີ່ວິທະຍຸສື່ສານລົບກວນ**

ພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ ເປັນເຈົ້າການຊອກຫາ ແລະ ແກ້ໄຂຄື້ນຄວາມຖີ່ວິທະຍຸສື່ສານລົບກວນ ຕາມການສະເໜີຂອງທຸກພາກສ່ວນ ແລະ ທຸກກໍລະນີທີ່ກວດພົບເຫັນ ເພື່ອແກ້ໄຂໃຫ້ທັນເວລາ.

ໃນການແກ້ໄຂບັນຫາຄື້ນຄວາມຖີ່ວິທະຍຸສື່ສານລົບກວນ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ທີ່ເປັນເຈົ້າຂອງສະຖານີຄື້ນຄວາມຖີ່ວິທະຍຸສື່ສານ ທີ່ຖືກສົງໃສກໍ່ໃຫ້ເກີດການລົບກວນ ຕ້ອງໃຫ້ຄວາມຮ່ວມມືກັບພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ;

2. ຜູ້ທີ່ໄດ້ຮັບອະນຸຍາດ ຕ້ອງແຈ້ງໃຫ້ພະນັກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ ລົງກວດກາແກ້ໄຂໃນກໍລະນີສົງໃສວ່າຕົນຖືກລົບກວນ;

3. ພິຈາລະນາແກ້ໄຂຄື້ນຄວາມຖີ່ວິທະຍຸສື່ສານລົບກວນ ຕາມແຕ່ກໍລະນີ ທີ່ເຫັນວ່າມີຄວາມສໍາຄັນ, ມີບູລິມະສິດ ແລະ ມີເງື່ອນໄຂຄົບຖ້ວນ;

4. ລົງກວດ ແລະ ແກ້ໄຂກ່ອນໃນກໍລະນີ ຄື້ນຄວາມຖີ່ວິທະຍຸສື່ສານລົບກວນທີ່ສົ່ງຜົນເຖິງຄວາມປອດໄພແກ່ຊີວິດ;

5. ຄວບຄຸມສະຖານີຄື້ນຄວາມຖີ່ວິທະຍຸສື່ສານ ໄລຍະຊົ່ວຄາວ;

6. ສັ່ງຢຸດຕິການນໍາໃຊ້, ຖອນການຕິດຕັ້ງ ແລະ ອາຍັດອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານທັງໝົດ ຖ້າເຫັນວ່າມີການນໍາໃຊ້ທີ່ຜິດຕໍ່ກົດໝາຍ ແລະ ລະບຽບການ;

7. ເຮັດບົດບັນທຶກທຸກຄັ້ງ ຕໍ່ຜູ້ລະເມີດເມື່ອກວດກາພົບເຫັນ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 13** ການຈັດຕັ້ງປະຕິບັດ

ມອບໃຫ້ກົມຄົ້ນຄວາມຖີ່, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 14** ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ລັດຖະມົນຕີ

ທັນສະໄໝ ກົມມະສິດ